**Alumni Innovation Grants (AIG) - Frequently Asked Questions (FAQ)**
**ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ (AIG) - ຄໍາຖາມທີ່ຖືກຖາມເລື້ອຍໆ**

**<u>Application ການສະໝັກຂໍທຶນ</u>**

1. **What are Alumni Innovation Grants (AIG)?**

   Alumni Innovation Grants (AIG) are funding initiatives delivered by the Australian Government through the Laos Australia Institute (LAI) since 2020. The AIG initiatives focus on responding to the COVID-19. Through five rounds of implementation, the grants have expanded its focus to climate change response, disability inclusion, economic empowerment of local women, and other community development initiative. Alumni Innovation Grants (AIG) are designed to support innovative projects led by alumni that contribute to the development of their communities, industries, or fields of expertise. These grants encourage creative solutions to local challenges and aim to foster sustainable impact.

   **ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ ແມ່ນຫຍັງ?**

   ລັດຖະບານອົດສະຕຣາລີ, ໂດຍຜ່ານ ສະຖາບັນລາວ-ອົດສະຕຣາລີ (LAI) ໄດ້ສະໜອງ ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ (AIG) ຕັ້ງແຕ່ປີ 2020. ການລິເລີ່ມຂອງ AIG ແມ່ນເນັ້ນໃສ່ການຟື້ນຟູຜົນກະທົບຂອງພະຍາດໂຄວິດ 19. ຜ່ານການຈັດຕັ້ງປະຕິບັດມາແລ້ວ 5 ຮອບ, ທຶນຊ່ວຍເຫຼືອຂະໜາດນ້ອຍໄດ້ຂະຫຍາຍຈຸດສຸມເຂົ້າໃນການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ, ການມີສ່ວນຮ່ວມຂອງຄົນພິການ, ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງຢູ່ທ້ອງຖິ່ນ ແລະ ຂໍ້ລິເລີ່ມພັດທະນາຊຸມຊົນອື່ນໆ. ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ (AIG) ຖືກອອກແບບມາເພື່ອສະໜັບສະໜູນໂຄງການໃໝ່ໆທີ່ຖືກນໍາພາໂດຍອະດີດນັກສຶກສາ ເພື່ອປະກອບສ່ວນເຂົ້າໃນການພັດທະນາຊຸມຊົນ, ອຸດສາຫະກໍາ ຫຼື ສາຂາວິຊາສະເພາະຂອງເຂົາເຈົ້າ. ທຶນຊ່ວຍເຫຼືອຂະໜາດນ້ອຍນີ້ຊຸກຍູ້ໃຫ້ມີການແກ້ໄຂຢ່າງສ້າງສັນຕໍ່ກັບສິ່ງທ້າທາຍໃນທ້ອງຖິ່ນ ແລະ ແນໃສ່ການສົ່ງເສີມໃຫ້ມີຜົນກະທົບໄລຍະຍາວແບບຍືນຍົງ.

2. **What does “innovation” mean?**

   LAI defines "Innovation" in the context of AIG as developing impactful, adaptable, and sustainable solutions through novel approaches. This includes local adaptation, cross-sector collaboration, and a focus on achieving lasting positive change for Lao communities.

   **“ນະວັດຕະກໍາ” ໝາຍຄວາມວ່າແນວໃດ?**

   ສະຖາບັນລາວ-ອົດສະຕຣາລີ (LAI) ໃຫ້ຄໍານິຍາມຄໍາວ່າ “ນະວັດຕະກໍາ” ໃນສະພາບເງື່ອນໄຂຂອງທຶນ AIG ແມ່ນ ການພັດທະນາການແກ້ໄຂບັນຫາທີ່ສ້າງຜົນກະທົບ, ມີຄວາມຍືດຍຸ່ນ ແລະ ຍືນຍົງ ໂດຍຜ່ານຂະບວນການຄິດທີ່ສ້າງສັນ, ໝູນໃຊ້ໃຫ້ແທດເໝາະກັບທ້ອງຖິ່ນ, ມີການປະສານສົມທົບຂອງຫຼາຍຂະແໜງການ ແລະ ເນັ້ນໜັກຜົນໄດ້ຮັບທາງບວກທີ່ຍືນຍົງ ໃຫ້ແກ່ຊຸມຊົນລາວ.

3. **Who is eligible to apply for AIG?**

The AIG is open to all Laos Australia Alumni including Australia Awards Alumni, Australia Awards Short Course Alumni, Laos Australia National Alumni and Disability Inclusive Development Alumni as well as private fee-paying alumni who have graduated from a recognised Australian tertiary institution. Alumni can apply as individuals or as part of a group of up to four alumni or non-alumni. We encourage all alumni to apply, and we strongly encourage alumni with disability, alumni from remote regions, LGBTIQ+ alumni, women alumni and alumni from other marginalised groups to apply.

**ຜູ້ໃດມີສິດສະໝັກ ທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາລາວ-ອົດສະຕຣາລີ (AIG)?**

ທຶນ AIG ເປີດໃຫ້ກັບອະດີດນັກສຶກສາລາວ-ອົດສະຕຣາລີ ທຸກທ່ານ ລວມມີ ອະດີດນັກສຶກສາທຶນການສຶກສາຂອງປະເທດອົດສະຕຣາລີ (AAS), ອະດີດນັກສຶກສາທຶນການສຶກສາໄລຍະສັ້ນຂອງປະເທດອົດສະຕຣາລີ (AASC), ອະດີດນັກສຶກສາທຶນການສຶກສາພາຍໃນປະເທດທີ່ສະໜັບສະໜູນໂດຍອົດສະຕຣາລີ (LANS) ແລະ ອະດີດນັກສຶກສາທຶນການພັດທະນາເພື່ອຄົນພິການ (DID), ພ້ອມທັງ ອະດີດນັກສຶກສາທີ່ໃຊ້ທຶນຕົນເອງໄປຮຽນຢູ່ປະເທດອົດສະຕຣາລີ ຫຼື ຜູ້ທີ່ຈົບການສຶກສາຈາກສະຖາບັນການສຶກສາທີ່ເປັນທາງການຂອງປະເທດອົດສະຕຣາລີ. ອະດີດນັກສຶກສາ ສາມາດສະໝັກຂໍທຶນ ໃນນາມບຸກຄົນ ຫຼື ເປັນສ່ວນໜຶ່ງຂອງກຸ່ມທີ່ມີສະມາຊິກບໍ່ເກີນ 4 ຄົນ ທັງທີ່ເປັນ ຫຼື ບໍ່ເປັນ ອະດີດນັກສຶກສາ.

ພວກເຮົາຂໍເຊີນຊວນໃຫ້ອະດີດນັກສຶກສາທຸກຄົນສະໝັກທຶນນີ້ ແລະ ໂດຍສະເພາະຂໍເຊີນຊວນບັນດາອະດີດນັກສຶກສາທີ່ມີຄວາມພິການ, ອະດີດນັກສຶກສາທີ່ຢູ່ເຂດຫ່າງໄກ, ອະດີດນັກສຶກສາທີ່ມີຄວາມຫຼາກຫຼາຍທາງເພດ LGBTIQ+, ອະດີດນັກສຶກສາທີ່ເປັນແມ່ຍິງ ແລະ ອະດີດນັກສຶກສາທີ່ຢູ່ໃນກຸ່ມດ້ອຍໂອກາດ ໃຫ້ຍື່ນສະໝັກທຶນນີ້.

4. **What types of projects are supported by AIG?**

Applicants are encouraged to explore more specific project ideas in the areas of interest. LAI promotes different types of grants activities, including community development, research, and training/capacity building. Applications for AIG projects are required to demonstrate how they will mainstream principles of gender equality, disability inclusion, and social inclusion. This ensures that projects are accessible and beneficial to all segments of the community. AIG projects should be innovative, feasible, and sustainable, with clear objectives and measurable outcomes. See more information in the Application and Selection Guidelines.

**ໂຄງການປະເພດໃດແດ່ທີ່ໄດ້ຮັບການສະໜັບສະໜູນຈາກ AIG?**

ຂໍເຊີນຊວນໃຫ້ຜູ້ສະໝັກທຶນ ຄົ້ນຄວ້າຫາແນວຄວາມຄິດໂຄງການທີ່ມີລັກສະນະເພາະຈະຈິງຕື່ມອີກໃນຂົງເຂດທີ່ຕົນສົນໃຈ. ສະຖາບັນລາວ-ອົດສະຕຣາລີ (LAI) ສົ່ງເສີມໃຫ້ມີກິດຈະກຳປະເພດຕ່າງໆທີ່ມີລັກສະນະແຕກຕ່າງກັນ ເຊັ່ນ: ການພັດທະນາຊຸມຊົນ, ການຄົ້ນຄວ້າ ແລະ ການຝຶກອົບຮົມ/ສ້າງຂີດຄວາມສາມາດ. ບົດສະເໜີໂຄງການເພື່ອຂໍທຶນ AIG ແມ່ນຕ້ອງສະແດງໃຫ້ເຫັນເຖິງວິທີການທີ່ຜູ້ຈັດຕັ້ງປະຕິບັດໂຄງການຈະນຳໃຊ້ຫຼັກການຕ່າງໆທີ່ກ່ຽວຂ້ອງກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການມີສ່ວນຮ່ວມຂອງຄວາມພິການ ແລະ ການມີສ່ວນຮ່ວມຂອງທຸກຄົນໃນສັງຄົມ. ນີ້ກໍເພື່ອຮັບປະກັນວ່າ ໂຄງການຈະສາມາດເຂົ້າເຖິງ ແລະ ສ້າງຜົນປະໂຫຍດໃຫ້ແກ່ທຸກໆພາກສ່ວນຂອງຊຸມຊົນ. ໂຄງການ AIG ຄວນມີຄວາມເປັນນະວັດຕະ

ກໍາ, ມີຄວາມເປັນໄປໄດ້, ແລະ ຍືນຍົງ, ໂດຍມີຈຸດປະສົງທີ່ຊັດເຈນ ແລະ ຜົນໄດ້ຮັບທີ່ສາມາດວັດແທກໄດ້. ອ່ານຂໍ້ມູນເພີ່ມເຕີມຢູ່ໃນ ບົດແນະນໍາກ່ຽວກັບການສະໝັກ ແລະ ການຄັດເລືອກ.

5. **How do I apply for AIG?**

To apply, please complete the AIG application form on our official website call SmartyGrants. See more information in the SmartyGrants User Guide for applicants. Applicants require to submit the completed application form and any required supporting documents by the specified deadline.

**ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ ສະໝັກແນວໃດ?**

ເພື່ອສະໝັກ, ກະລຸນາຕື່ມຂໍ້ມູນກ່ຽວກັບບົດສະເໜີໂຄງການຂອງທ່ານຜ່ານຊ່ອງອອນລາຍທາງ ເວັບໄຊທ໌ທາງການຂອງພວກເຮົາທີ່ມີຊື່ວ່າ SmartyGrants. ອ່ານຂໍ້ມູນເພີ່ມເຕີມທີ່ SmartyGrants User Guide for applicants. ຜູ້ສະໝັກຕ້ອງສົ່ງແບບຟອມສະໝັກທີ່ສໍາເລັດແລ້ວ ແລະ ເອກະສານທີ່ກ່ຽວຂ້ອງ ພາຍໃນເວລາທີ່ກໍານົດໄວ້.

6. **Can I fill out an application form in Lao language?**

Applications must be submitted in English. However, translation support is available only for applicants from the equity group. Alumni from the equity group, including alumni living with disabilities or limited English language capacity, are encouraged to inform LAI two weeks in advance through this email address: alumni@laosaustraliainstitute.org should you require assistance to complete your application.

**ເຮົາສາມາດຕື່ມແບບຟອມສະໝັກເປັນພາສາລາວໄດ້ບໍ່?**

ແບບຟອມສະໝັກທີ່ຍື່ນມາຕ້ອງເປັນພາສາອັງກິດ. ການສະໜັບສະໜູນແປພາສາຈະມີໃຫ້ແກ່ ຜູ້ສະໝັກຈາກກຸ່ມທີ່ມີຄວາມຕ້ອງການການຊ່ວຍເຫຼືອພິເສດ (equity group). ອະດີດນັກສຶກສາຈາກກຸ່ມທີ່ມີຄວາມຕ້ອງການການຊ່ວຍເຫຼືອພິເສດ, ລວມທັງອະດີດນັກສຶກສາທີ່ມີຄວາມພິການ ຫຼື ມີຄວາມສາມາດດ້ານພາສາອັງກິດທີ່ຈໍາກັດ, ແນະນໍາໃຫ້ແຈ້ງທີມງານຂອງ ສະຖາບັນລາວ-ອົດສະຕຣາລີ ລ່ວງໜ້າສອງອາທິດ ໂດຍໃຫ້ຕິດຕໍ່ຜ່ານອີເມວນີ້: alumni@laosaustraliainstitute.org ເຊິ່ງລວມທັງ ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການປະກອບແບບສະໝັກ.

7. **Do I have to declare a conflict of interest?**

All applicants are required to declare a conflict of interest. If there is nothing to declare, applicants must complete section A. If applicants have a conflict of interests, applicants must complete the section B. The conflict of interest will be assessed on a case-by-case basis. ***Please note declaring a conflict of interest will not preclude you from receiving a grant.*** See more information in the Application and Selection Guidelines.

**ເຮົາຕ້ອງແຈ້ງກ່ຽວກັບຜົນປະໂຫຍດທັບຊ້ອນບໍ່?**

ຜູ້ສະໝັກທຸກທ່ານຈະຕ້ອງໄດ້ມີການແຈ້ງເຖິງຜົນປະໂຫຍດທັບຊ້ອນ. ຖ້າຜູ້ສະໝັກຄິດວ່າໂຄງການຂອງຕົນບໍ່ມີຜົນປະໂຫຍດທັບຊ້ອນ, ຜູ້ສະໝັກຕ້ອງຕື່ມຂໍ້ມູນໃສ່ພາກ A. ຖ້າຜູ້ສະໝັກຄິດວ່າໂຄງການຂອງຕົນອາດມີບາງຈຸດທີ່ກ່ຽວກັບຜົນປະໂຫຍດ

ທັບຊ້ອນ, ຜູ້ສະໝັກຕ້ອງຕື່ມຂໍ້ມູນໃສ່ພາກ B. ຜົນປະໂຫຍດທັບຊ້ອນຈະມີການປະເມີນຕາມແຕ່ລະກໍລະນີ. ***ຂໍແຈ້ງໃຫ້ທ່ານຊາບວ່າ ການແຈ້ງກ່ຽວກັບຜົນປະໂຫຍດທັບຊ້ອນ ຈະບໍ່ມີຜົນຕໍ່ການພິຈາລະນາໃນການຕັດສິນໂຄງການຂອງທ່ານ ໃນການໄດ້ຮັບທຶນ AIG.*** ອ່ານຂໍ້ມູນເພີ່ມເຕີມຢູ່ໃນ ບົດແນະນຳກ່ຽວກັບການສະໝັກ ແລະ ການຄັດເລືອກ.

8. **What is risk assessment?**

Risk assessment involves identifying potential risks to your project and outlining strategies to manage them. Applicants are required to identify at least one risk associated with the project's implementation and detail how they will address it. This includes risks related to the delivery of activities, achievement of results, sustainability beyond project completion, use of grant funding, and the reputation of LAI and DFAT. For further details, please refer to the Application and Selection Guidelines.

**ການປະເມີນຄວາມສ່ຽງໝາຍຄວາມວ່າຫຍັງ?**

ການປະເມີນຄວາມສ່ຽງ ກ່ຽວຂ້ອງກັບການກຳນົດຄວາມສ່ຽງທີ່ອາດຈະເກີດຂຶ້ນກັບໂຄງການຂອງທ່ານ ແລະ ກຳນົດຍຸດທະສາດໃນການຄຸ້ມຄອງຄວາມສ່ຽງເຫຼົ່ານັ້ນ. ຜູ້ສະໝັກຈຳເປັນຕ້ອງໄດ້ກຳນົດຢ່າງຕໍ່າ ໜຶ່ງຄວາມສ່ຽງທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໂຄງການ ແລະ ລາຍລະອຽດວິທີການແກ້ໄຂ. ປະກອບມີຄວາມສ່ຽງທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດກິດຈະກຳ, ການບັນລຸຜົນໄດ້ຮັບ, ຄວາມຍືນຍົງນອກເໜືອຈາກການສຳເລັດໂຄງການ, ການນຳໃຊ້ທຶນຊ່ວຍເຫຼືອ, ແລະ ຊື່ສຽງຂອງ LAI ຫຼື ລັດຖະບານອົດສະຕຣາລີ. ສຳລັບລາຍລະອຽດເພີ່ມເຕີມ, ກະລຸນາອ່ານຂໍ້ມູນເພີ່ມເຕີມຢູ່ໃນ ບົດແນະນຳກ່ຽວກັບການສະໝັກ ແລະ ການຄັດເລືອກ.

9. **Do I need a letter of support?**

If your project involves collaborating with a community, organization, business, or any other institution, you are required to include a letter of support with your application.

This letter should come from the partner or institution involved in your project and demonstrate their backing or endorsement of your initiative. The letter of support helps to validate your project and shows that you have the necessary support and cooperation from relevant stakeholders.

**ຂ້າພະເຈົ້າຕ້ອງມີໜັງສືຢັ້ງຢືນການສະໜັບສະໜູນບໍ່?**

ຖ້າ ໂຄງການ ມີຄວາມກ່ຽວຂ້ອງກັບ ຊຸມຊົນ ຫຼື ຄູ່ຮ່ວມງານທີ່ເປັນອົງການຈັດຕັ້ງ, ຫົວໜ່ວຍທຸລະກິດ ຫຼື ສະຖາບັນອື່ນໆ, ແບບຟອມສະໝັກທີ່ຍື່ນມານັ້ນ ຕ້ອງໄດ້ມີ ໜັງສືຢັ້ງຢືນການສະໜັບສະໜູນ.

ໜັງສືສະບັບນີ້ຄວນຈະມາຈາກຄູ່ຮ່ວມງານ ຫຼື ສະຖາບັນທີ່ກ່ຽວຂ້ອງກັບໂຄງການຂອງທ່ານ ແລະ ສະແດງໃຫ້ເຫັນການສະໜັບສະໜູນ ຫຼື ການຮັບຮອງໂຄງການຂອງທ່ານ. ໜັງສືສະໜັບສະໜູນຈະຊ່ວຍຢືນຢັນວ່າໂຄງການຂອງທ່ານມີຄວາມເປັນໄປໄດ້ ແລະ ສະແດງໃຫ້ເຫັນວ່າທ່ານໄດ້ຮັບການສະໜັບສະໜູນ ແລະ ການຮ່ວມມືທີ່ຈຳເປັນຈາກພາກສ່ວນທີ່ກ່ຽວຂ້ອງ.

10. **Can I implement the same project as the previous grantee?**

Applicants can implement the same project as a previous grantee. However, the project should be implemented in a different location. LAI encourages applicants to demonstrate additional value, adapt to new circumstances, or better meet the needs of the community or target groups.

**ຂ້າພະເຈົ້າສາມາດຈັດຕັ້ງປະຕິບັດໂຄງການອັນດຽວກັນກັບຜູ້ທີ່ເຄີຍໄດ້ຮັບທຶນຮອບຜ່ານມາ ໄດ້ບໍ່?**

ຜູ້ສະໝັກສາມາດຈັດຕັ້ງປະຕິບັດໂຄງການອັນດຽວກັນກັບຜູ້ທີ່ເຄີຍໄດ້ຮັບທຶນຮອບຜ່ານມາ. ແຕ່ວ່າ, ໂຄງການດຽວກັນນັ້ນ ຄວນຈະຕ້ອງຈັດຕັ້ງປະຕິບັດຢູ່ສະຖານທີ່ທີ່ແຕກຕ່າງກັນ. LAI ຊຸກຍູ້ໃຫ້ຜູ້ສະໝັກສະແດງໃຫ້ເຫັນເຖິງມູນຄ່າເພີ່ມເຕີມ, ການປັບຕົວເຂົ້າກັບສະຖານະການໃໝ່, ຫຼື ຕອບສະໜອງຄວາມຕ້ອງການຂອງຊຸມຊົນ ຫຼື ກຸ່ມເປົ້າໝາຍ.

11. **Can I choose the same location of the previous project for my project?**

    Applicants can choose the same location as the previous project. It is important that your project introduces a new approach, solution, or addresses different aspects of the community's needs that were not covered by the earlier project.

    **ຂ້າພະເຈົ້າສາມາດເລືອກສະຖານທີ່ ດຽວກັນກັບໂຄງການທີ່ຜ່ານມາ ສໍາລັບຈັດຕັ້ງປະຕິບັດໂຄງການຂອງຂ້າພະເຈົ້າໄດ້ບໍ່?**

    ຜູ້ສະໝັກສາມາດເລືອກສະຖານທີ່ດຽວກັນກັບໂຄງການຂອງຜູ້ທີ່ເຄີຍໄດ້ຮັບທຶນຮອບຜ່ານມາ. ສິ່ງສໍາຄັນແມ່ນໂຄງການຂອງທ່ານຈະຕ້ອງນໍາໃຊ້ວິທີການໃໝ່ໆ, ການແກ້ໄຂບັນຫາແບບໃໝ່, ຫຼື ສຸມໃສ່ ຄວາມຕ້ອງການດ້ານອື່ນຂອງຊຸມຊົນ ທີ່ຍັງບໍ່ທັນໄດ້ກວມເອົາໂດຍໂຄງການທີ່ຜ່ານມາ.

12. **Can the project work directly with children?**

    Please be aware that projects with children as direct beneficiaries will not be considered. However, if children are indirect beneficiaries of your project, it will be eligible.

    For further clarification, please contact the Alumni Engagement Team at the Laos Australia Institute via email at alumni@laosaustraliainstitute.org.

    **ໂຄງການສາມາດເຮັດວຽກໂດຍກົງກັບເດັກນ້ອຍໄດ້ບໍ?**

    ໂຄງການທີ່ມີເດັກນ້ອຍເປັນຜູ້ໄດ້ຮັບຜົນປະໂຫຍດໂດຍກົງຈະບໍ່ຖືກພິຈາລະນາ. ຢ່າງໃດກໍຕາມ, ຖ້າເດັກນ້ອຍເປັນຜູ້ໄດ້ຮັບຜົນປະໂຫຍດທາງອ້ອມຈາກໂຄງການຂອງທ່ານ ແມ່ນຈະມີສິດທິຈະໄດ້ຮັບເລືອກ.

    ເພື່ອຄວາມກະຈ່າງແຈ້ງເພີ່ມເຕີມ, ກະລຸນາຕິດຕໍ່ທີມງານ ສົ່ງເສີມການມີສ່ວນຮ່ວມຂອງອະດີດນັກສຶກສາ ທີ່ສະຖາບັນ ລາວ-ອົດສະຕຣາລີ ຜ່ານທາງອີເມວ alumni@laosaustraliainstitute.org.

13. **What should be included in the project proposal?**

    Your project proposal should include:

    - A clear project objectives and implementation plan.
    - An explanation of how the project aligns with AIG themes for each round.
    - An outline of the expected outcomes and indicators.
    - A detailed budget.
    - A support letter from relevant partnerships organisation or village authority (if the project is going to implement in the village).

    **ສິ່ງທີ່ຄວນປະກອບເຂົ້າໃນບົດສະເໜີໂຄງການ ມີຫຍັງແດ່?**

    ບົດສະເໜີໂຄງການຂອງທ່ານຈະຕ້ອງມີ:

    - ເປົ້າໝາຍໂຄງການ ແລະ ແຜນຈັດຕັ້ງປະຕິບັດທີ່ຈະແຈ້ງ.
    - ຄໍາອະທິບາຍວ່າໂຄງການສອດຄ່ອງກັບຫົວຂໍ້ AIG (themes) ສໍາລັບແຕ່ລະຮອບ.

- ລາຍລະອຽດຂອງຜົນໄດ້ຮັບທີ່ຄາດໄວ້ ແລະ ຕົວຊີ້ວັດ.
- ແຜນນຳໃຊ້ງົບປະມານທີ່ລະອຽດ.
- ໜັງສືຢັ້ງຢືນການສະໜັບສະໜູນຈາກຄູ່ຮ່ວມງານທີ່ເປັນອົງການຈັດຕັ້ງທີ່ກ່ຽວຂ້ອງ ຫຼື ອຳນາດການປົກຄອງບ້ານ (ຖ້າ ໂຄງການຈະໄປຈັດຕັ້ງປະຕິບັດຢູ່ບ້ານ).

14. **Can I submit more than one application?**

    Yes, you may submit multiple applications if you have different project ideas. However, please note that each alumnus can receive only one grant. If you submit two different applications-one as an individual and another as part of a group- LAI will consider both applications on a case-by-case basis.

    **ຂ້າພະເຈົ້າສາມາດສົ່ງຫຼາຍກວ່າໜຶ່ງບົດສະເໜີໂຄງການໄດ້ບໍ່?**

    ຜູ້ສະໝັກສາມາດສົ່ງໄດ້ຫຼາຍກວ່າ 1 ບົດສະເໜີໂຄງການຫາກວ່າທ່ານມີແນວຄວາມຄິດໂຄງການທີ່ແຕກຕ່າງກັນ. ແຕ່ວ່າ LAI ຈະສະໜອງ 1 ທຶນໃຫ້ແກ່ 1 ໂຄງການຕໍ່ຜູ້ສະໝັກ 1 ທ່ານເທົ່ານັ້ນ. ຖ້າວ່າ ຜູ້ສະໝັກຍື່ນ 2 ບົດສະເໜີໂຄງການທີ່ແຕກຕ່າງກັນ, ເຊິ່ງບົດສະເໜີໂຄງການ 1 ແມ່ນໃນນາມບຸກຄົນ ແລະ ອີກບົດສະເໜີໂຄງການ 1 ແມ່ນໃນນາມເປັນສະມາຊິກຂອງກຸ່ມ, ທາງ LAI ຈະພິຈາລະນາທັງ 2 ບົດສະເໜີໂຄງການ ໂດຍຈະພິຈາລະນາຕາມແຕ່ລະກໍລະນີ.

## <u>Finance ການເງິນ</u>

15. **How much funding is available?**

    The amount of funding and duration of implementation will be announced for each round. Applicants are encouraged to propose realistic budgets that align with their project needs. The grants typically cover project-related expenses such as management costs, materials, equipment, and other related costs. It is important that the project budget demonstrates value for money. See more information in the Financial Guidelines.

    **ທຶນຊ່ວຍເຫຼືອນີ້ມີຈຳນວນເທົ່າໃດ?**

    ຈຳນວນເງິນທຶນ ແລະ ໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການຈະຖືກປະກາດສຳລັບແຕ່ລະຮອບ. ຜູ້ສະໝັກຄວນສະເໜີແຜນນຳໃຊ້ງົບປະມານທີ່ແທ້ຈິງ ແລະ ສອດຄ່ອງກັບຄວາມຕ້ອງການຂອງໂຄງການ. ປົກກະຕິແລ້ວ ທຶນຊ່ວຍເຫຼືອຈະກວມເອົາຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບໂຄງການເຊັ່ນ: ຄ່າໃຊ້ຈ່າຍໃນການຄຸ້ມຄອງບໍລິຫານໂຄງການ, ວັດສະດຸ, ອຸປະກອນ, ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງ. ສິ່ງສຳຄັນແມ່ນແຜນນຳໃຊ້ງົບປະມານຂອງໂຄງການຈະຕ້ອງສະແດງໃຫ້ເຫັນ ຄວາມຄຸ້ມຄ່າໃນການນຳໃຊ້ເງິນ. ອ່ານຂໍ້ມູນເພີ່ມເຕີມຢູ່ໃນ ບົດແນະນຳດ້ານການເງິນ.

16. **How much budget is allocated for the project leader or project member?**

    Fees paid to alumni or the project team for contributions to the project implementation are no more than 20% of the total project budget. This payment required detailed timesheets that clearly stated the hourly rate or daily rate. See more information in the Financial Guidelines.

    **ງົບປະມານຈະຖືກຈັດສັນ ໃຫ້ຫົວໜ້າໂຄງການ ຫຼື ສະມາຊິກໂຄງການຫຼາຍປານໃດ?**

    ງົບປະມານທີ່ສາມາດຈ່າຍໃຫ້ແກ່ອະດີດນັກສຶກສາ ຫຼື ທີມງານໂຄງການເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດໂຄງການແມ່ນບໍ່ເກີນ 20% ຂອງງົບປະມານທັງໝົດຂອງໂຄງການ. ການຈ່າຍເງິນນີ້ ແມ່ນຕ້ອງການຕາຕະລາງລາຍລະອຽດກ່ຽວກັບເວລາເຮັດວຽກຂອງທີມງານໂຄງການ ທີ່ລະບຸອັດຕາຂອງລາຍຈ່າຍແບບຊົ່ວໂມງ ຫຼື ອັດຕາລາຍຈ່າຍປະຈຳວັນຢ່າງຈະແຈ້ງ. ອ່ານຂໍ້ມູນເພີ່ມເຕີມຢູ່ໃນ ບົດແນະນຳດ້ານການເງິນ.

17. **What payments will not be covered by the grant?**

The Alumni Innovation Grants do not cover certain expenses as outlined in item No. 6 of the Financial Guidelines. The applicants are required to provide the details of the project budget in both LAO KIP (LAK) and Australian Dollar (AUD) currency. Grants will be disbursed by bank transfer in Lao Kip (LAK). If the actual expenses in LAK exceed the estimated budget, the project budget will be adjusted based on the AUD amount.

**ລາຍການເບີກຈ່າຍໃດແດ່ທີ່ຈະບໍ່ມີສິດໄດ້ຮັບການສະໜັບສະໜູນງົບປະມານຈາກທຶນ?**

ທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາລາວ-ອົດສະຕຣາລີ ຈະບໍ່ກວມເອົາຄ່າໃຊ້ຈ່າຍກ່ຽວກັບບາງສິນຄ້າ ແລະ ບໍລິການ ຕາມທີ່ໄດ້ລະບຸໄວ້ໃນຂໍ້ທີ 6 ຂອງບົດແນະນຳດ້ານການເງິນ. ຜູ້ສະໝັກຈະຕ້ອງລະບຸລາຍລະອຽດຂອງງົບປະມານ ໂຄງການ ທັງເປັນເງິນກີບ (LAK) ແລະ ເງິນໂດລາອົດສະຕຣາລີ (AUD). ທຶນຊ່ວຍເຫຼືອຈະຖືກເບີກຈ່າຍໂດຍການໂອນຜ່ານ ທະນາຄານເປັນເງິນກີບ (LAK). ຖ້າຄ່າໃຊ້ຈ່າຍຕົວຈິງສະກຸນເງິນກີບ (LAK) ເກີນງົບປະມານທີ່ຄາດໄວ້ໃນແຜນ, ງົບປະມານ ຂອງໂຄງການຈະຖືກດັດປັບຕາມຈຳນວນລວມຂອງສະກຸນເງິນໂດລາອົດສະຕຣາລີ (AUD).

18. **Can applicants edit the budget template (excel file)?**

Applicants can edit the budget template, but they have to ensure that the total amount is accurate.

**ຜູ້ສະໝັກສາມາດແກ້ໄຂຕາຕະລາງແຜນນຳໃຊ້ງົບປະມານ (ໄຟລ໌ excel) ໄດ້ບໍ?**

ຜູ້ສະໝັກສາມາດແກ້ໄຂຕາຕະລາງແຜນນຳໃຊ້ງົບປະມານໄດ້, ແຕ່ຕ້ອງຮັບປະກັນວ່າຈຳນວນລວມທັງໝົດແມ່ນຖືກຕ້ອງ.

19. **Does the grantee have to pay tax?**

Grantees are responsible for making their own arrangements regarding any taxation liabilities that may arise from the award of funding. According to previous grantees, this grant is not subjected to taxation because it’s an assistance project.

**ຜູ້ສະໝັກຕ້ອງເສຍພາສີອາກອນບໍ່?**

ຜູ້ໄດ້ຮັບທຶນ ມີຄວາມຮັບຜິດຊອບໃນການຊຳລະຈ່າຍພັນທະອາກອນຂອງຕົນເອງ ເຊິ່ງອາດຈະເກີດຂຶ້ນຈາກການສະໜອງ ທຶນນີ້. ອີງຕາມຜູ້ທີ່ໄດ້ຮັບທຶນຮອບຜ່ານມາ, ທຶນຊ່ວຍເຫຼືອນີ້ບໍ່ໄດ້ຖືກເກັບຄ່າພາສີຍ້ອນວ່າເປັນໂຄງການຊ່ວຍເຫຼືອ.

## Assessment and Result
## ຂັ້ນຕອນການປະເມີນບົດສະເໜີໂຄງການ ແລະ ຜົນຂອງການຄັດເລືອກ

20. **What is the selection process?**

The selection process involves an initial review of applications by the AIG team, followed by an evaluation by a panel of experts. Shortlisted applicants may be invited for an interview or to provide additional information. For further details, please refer to the Application and Selection Guidelines.

**ຂະບວນການຄັດເລືອກເປັນແນວໃດ?**

ຂະບວນການຄັດເລືອກປະກອບມີການກວດແບບຟອມສະໝັກເບື້ອງຕົ້ນ ໂດຍທີມງານຜູ້ຮັບຜິດຊອບ AIG, ຕິດຕາມດ້ວຍການປະເມີນຜົນໂດຍຄະນະຜູ້ຊ່ຽວຊານ. ຜູ້ສະໝັກທີ່ຖືກຄັດເລືອກອາດຈະຖືກເຊີນໃຫ້ມາສຳພາດ ຫຼື ຂໍໃຫ້ສົ່ງຂໍ້ມູນເພີ່ມເຕີມ. ສຳລັບລາຍລະອຽດເພີ່ມເຕີມ, ກະລຸນາອ່ານຂໍ້ມູນຢູ່ໃນ ປຶ້ມແນະນຳກ່ຽວກັບການສະໝັກ ແລະ ການຄັດເລືອກ.

21. **When will I be notified of the results?**

Applicants will be notified of the results within [specific timeframe, e.g., 4-6 weeks] after the application deadline. Successful applicants will receive further instructions on the grant disbursement process.

**ຂ້າພະເຈົ້າຈະຮູ້ຜົນມື້ໃດ?**

ຜູ້ສະໝັກຈະໄດ້ຮັບການແຈ້ງການກ່ຽວກັບຜົນຂອງການຄັດເລືອກພາຍໃນ [ໄລຍະເວລາທີ່ກຳນົດ, ເຊັ່ນ: 4-6 ອາທິດ] ຫຼັງຈາກການປິດຮັບສະໝັກ. ຜູ້ສະໝັກທີ່ໄດ້ຮັບທຶນຈະໄດ້ຮັບຄຳແນະນຳເພີ່ມຕື່ມອີກກ່ຽວກັບຂະບວນການການເບີກຈ່າຍເງິນທຶນ.

22. **What are the reporting requirements for grant recipients?**

Grant recipients are required to submit periodic progress reports and a final report upon project completion. These reports should include a summary of activities conducted and the outcomes achieved, and the financial reports should include details of all expenditure and scan bills.

**ຂໍ້ກຳນົດໃນການລາຍງານສຳລັບຜູ້ໄດ້ຮັບທຶນ?**

ຜູ້ໄດ້ຮັບທຶນຕ້ອງສົ່ງບົດລາຍງານຄວາມຄືບໜ້າໄລຍະກາງ ແລະ ບົດລາຍງານສຸດທ້າຍເມື່ອໂຄງການສຳເລັດແລ້ວ. ບົດລາຍງານເຫຼົ່ານີ້ຄວນປະກອບມີບົດສະຫຼຸບຂອງກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດໄປແລ້ວ, ອະທິບາຍວ່າຜົນໄດ້ຮັບແມ່ນບັນລຸຕາມຄາດໝາຍຫຼືບໍ່, ແລະ ບົດລາຍງານດ້ານການເງິນ ທີ່ປະກອບດ້ວຍລາຍລະອຽດຂອງລາຍຈ່າຍທັງຫມົດ ລວມທັງສົ່ງສະແກນຂອງໃບບິນທັງໝົດ.

23. **Can I request an extension for my project timeline?**

Extensions may be granted in exceptional circumstances. Please contact the AIG team as soon as possible to discuss any potential delays or challenges in meeting your project timeline.

**ຂ້າພະເຈົ້າສາມາດຂໍຂະຫຍາຍຂອບເວລາຂອງການຈັດຕັ້ງປະຕິບັດໂຄງການໄດ້ບໍ?**

ການຂະຫຍາຍຂອບເວລາຂອງການຈັດຕັ້ງປະຕິບັດໂຄງການອາດຈະໄດ້ຮັບການອະນຸຍາດໃນກໍລະນີພິເສດ. ກະລຸນາຕິດຕໍ່ທີມງານຜູ້ຮັບຜິດຊອບ AIG ເພື່ອປຶກສາຫາລືກ່ຽວກັບຄວາມລ່າຊ້າ ຫຼື ສິ່ງທ້າທາຍທີ່ອາດຈະເກີດຂຶ້ນໃນຂະນະທີ່ກຳລັງຈັດຕັ້ງປະຕິບັດໂຄງການຕາມກຳນົດເວລາ.

24. **Who can I contact for more information?**

For additional information or specific inquiries, please contact the AIG team at alumni@laosaustraliainstitute.org or visit our website at laosaustraliainstitute.org.

**ຖ້າຕ້ອງການຂໍ້ມູນເພີ່ມເຕີມ ຂ້າພະເຈົ້າສາມາດຕິດຕໍ່ໃຜໄດ້ແດ່?**

ສຳລັບຂໍ້ມູນເພີ່ມເຕີມ ຫຼື ສອບຖາມຂໍ້ມູນສະເພາະ, ກະລຸນາຕິດຕໍ່ຫາທີມງານຜູ້ຮັບຜິດຊອບ AIG ຜ່ານອີເມວ alumni@laosaustraliainstitute.org ຫຼື ເຂົ້າໄປເວັບໄຊທ໌ຂອງພວກເຮົາທີ່ laosaustraliainstitute.org.